ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

****

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ

VIENTIANE CENTER
ວຽງຈັນເຊັນເຕີ

ເລກທີ: 003 /ວຈຊຕ

ນະຄອນຫຼວງວຽງຈັນ, ວັນທີ: 06 MAR 2025

ຮຽນ: ທ່ານ ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື.

ທ່ານ ຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ ທີ່ນັບຖື.

ບັນດາຜູ້ຖືຮຸ້ນຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນ ສະພາບໍລິຫານຂອງບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ ຄັ້ງທີ 1 ປະຈຳປີ 2025

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍລານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 27/ຄຄຊ, ລົງວັນທີ 29 ມີນາ 2022.

- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ (ວຈຊຕ) ຂໍຖືເປັນກຽດແຈ້ງມະຕິຂອງກອງປະຊຸມວິສາມັນ ສະພາບໍລິຫານ ຄັ້ງທີ 1 ປະຈຳປີ 2025 ໃນ ວັນທີ 06 ມີນາ 2025, ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

<u>ມະຕິ :</u> ເຫັນດີຮັບຮອງແຜນການຈັດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2024 ດັ່ງນີ້:

- ກຳນົດເອົາວັນທີ 21/03/2025 ເປັນມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນຂອງ ວຈຊຕ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2024;
- ວັນ ເວລາ ແລະ ສະຖານທີ່ຈັດກອງປະຊຸມສາມັນຜູ້ຖືຮຸ້ນ ວຈຊຕ ປະຈຳປີ 2024 ແມ່ນການົດເອົາ ວັນທີ 29/04/2025 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ diamond room ຂອງໂຮງແຮມແລນມາກ.
- ສຳລັບວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ແມ່ນຄືດັ່ງລຸ່ມນີ້:
  1) ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາສາມັນຜູ້ຖືຮຸ້ນປະຈຳປີ 2023;
  2) ພິຈາລະນາ ແລະ ຮັບຮອງບົດລາຍງານການເງິນຂອງ ວຈຊຕ ປະຈຳປີ 2024;

3) ພິຈາລະນາ ແລະ ຮັບຮອງບົດລາຍງານຜົນການດຳເນີນທຸລະກິດປະຈຳປີ 2024 ແລະ ແຜນການດຳເນີນທຸລະກິດ 2025 ຂອງ ວຈຊຕ;
4) ພິຈາລະນາ ແລະ ຮັບຮອງແຜນການຈັດສັນຜົນກຳໄລສຸດທິປະຈຳປີ 2024 ;
5) ພິຈາລະນາ ການແຕ່ງຕັ້ງບໍລິສັດກວດສອບບັນຊີພາຍນອກປະຈຳປີ 2025;
6) ພິຈາລະນາ ແລະ ຮັບຮອງການຊັບປ່ຽນ ສະມາຊິກສະພາບໍລິຫານ;
7) ພິຈາລະນາ ແລະ ຮັບຮອງການປັບປ່ຽນ ຄະນະກຳມະການກວດສອບຂອງ ວຈຊຕ;
8) ພິຈາລະນາ ແລະ ຮັບຮອງການດັດແກ້ກິດລະບຽບ ຂອງ ບໍລິສັດ ມາດຕາ 9 ວ່າດ້ວຍຜູ້ອຳນວຍການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ
9) ພິຈາລະນາ ແລະ ຮັບຮອງການປັບປ່ຽນຜູ້ຕາງໜ້ານິຕິບຸກຄົນຂອງບໍລິສັດ ວຈຊຕ
10) ເລື່ອງອື່ນໆ(ຖ້າມີ).

ດັ່ງນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມເຄົາລົບ ແລະ ນັບຖືເປັນຢ່າງສູງ

ຜູ້ອຳນວຍການໃຫຍ່

ບໍລິສັດ ວຽງຈັນເຊັ້ນເຕີ ລາວ ມະຫາຊົນ
Vientiane Center Lao Public Company

Wang Wei Kun